# กลอนลำลาว

## เล่มปลาย

หอสมุดแห่งชาติ
2 6 พ.ย. 2530
กรมศิลปากร
หอสมุดแห่งชาติสาขานครราชสีมา

มีกลอนเกี้ยว ตั่ผี่ง เย้ย ทั้ง

กลอนโจทย์ และ กลอนแก้

ราคา ๕๐ สตางค์

โรงพิมพ์พานิชศุภผล

๑๑๒๖ ถนน สามเพ็ง กรุงเทพ ฯ

พ.ศ. ๒๔๖๘

เลขห้อง 105

เลขหมู่ 895.912
ก.294
ฉ.2

เลขทะเบียน น.๓๐ม.๑๑๐๕๘

# กลอนลำลาว

## เล่ม ๒

---

## กลอนเกี้ยว

๑ ฟั่งเจ้าฟั่งสัจจังน้องอุ่น แก้มจุ่นบุ่นเอาพี่เถาะนาง แม่คิงบางอย่าคึ่ดใจน้อย ให้ระห่อยผู้พี่มาวอน เอาพี่ซอนดีกว่าอยู่เปลี่ยว นมสิเหี่ยวชาวโลกนินทา เอาเถาะนาพี่บ่แกล้งเว่า พี่มักเจ้าจึ่งได้มาจา มักอำคาจึ่งได้เว่าต่อ มักพ่อแม่โคตร์เชื้อวงษา ปราถนานอนซอนแก้มอ่อน เจ้าอย่าฮ้อนกลัวพี่หลอกลวง พี่ขอซวงนมนางเบิ่งแด่ ย่านตั้งแต่เปนชู้ของเขา บ่หมายเอาหลอกชายหลงล้ม ให้พี่ก้มอายหน้ากระมัง แม่จันทังเว่าจริงต่อพี่ เปนที่ได้หมายส้อนจึ่งวอน เอาพี่ซอนเถาะน้องหล้า สมพอหน้าได้พี่เปนผัว พี่บ่ตั๋ว

ดอกนาน้องอุ่น แก้มจุ่นปุ่นหรือว่าจังใด บ่พอใจเอาชายหรือบ่ พ่อแถแม่โคตร์เชื้อวงษ์วาน ของนงคราญยินดีนำพี่ คึดให้ถี่แม่หม่อมทูนหัว บ่มีผัวอยู่เดียวเปนโสด เสียประโยชน์ชาวโลกนินทา หญิงโลกาเกิดมาเปนชู้ เจ้าอย่าบู้พึ่งพี่เหนี่ยววอน ควรสะออนเอาสาดีกว่า พี่บ่ชั่วเฮ็ดได้ทุกอัน แม่ทองจันทร์เจ้าอย่าคึดโศก เกินว่าโชคได้พี่หมอลำ พี่พาทำกองบุญตักบาตร์ บ่ให้ขาดวันพระวันศีล แม่ทองอินทร์เอาชายอย่าหน่าย บ่ขี้ฮ้ายเกินโลกโลกา วาศนาพอทันเทียมเผ่า ข่อยกับเจ้าสมมักสมแพง แม่หนูแดงเจ้าจงสังเวช อดสมเพชเลี้ยงไว้สืบสาย เอาพี่ชายเปนผัวนอนซ่อน บ่ให้ฮ่อนคอนค่าหามัน พี่สู้ขันทำตามทุกท่า บ่ให้เข้าป่าคือนางมัทรี บุญพี่มีหาเลี้ยงหน่อเหง้าส่วนว่าเจ้าหรือบ่ชอบใจ ติบ่อนใดสายใจบอกแด่หรือว่าพี่แก่กายหนุ่มกายแกง แม่หนูแดงเอาชายสาเถาะ ช่วยสงเคราะห์เลี้ยงไว้เปนสัง เจ้าอย่าหวังห

เอาผู้อื่น หาผู้อื่นเกินพี่บ่มี ในโลกีย์ล่ำซายหายาก อย่าลำบากเทาะแม่ทองดี บุญเฮามีได้มาเหนหน้า พั้ง เนอหล้าน้อยอุ่นนงฮาม ฮูบบ่ซามมวยผมดำปอด แขน ส่วยสอดคือดั่งเทวา เทพยดาหรือแม่นนางนาค อด เยื่อนปากจาอ้ายเปนสัง หรือเจ้าชังว่าพี่ผู้ฮ้าย ผู้จั้ง อ้ายฮูปฮ่างบ่งาม เวียกบ่ทรามเฮ็ดได้ทุกท่า พั้งพี่ว่า เปนน่ายินดี พี่บ่ติการงานทุกอย่าง พี่เปนช่างเฮ็ดได้ ทุกอัน อย่าโศกศัลย์สงกาสงเกิ๊ง เอาพี่เบิ่งบ่เชื่อใจ ซาย บ่ให้อายวงษาหน่อเหง้า ยามเจ้าเถ้าบ่มีผู้หัวซา ยามชะราบ่มีผู้ล่ำ เข้าแลน้ำไผสิเฮ็ดให้กิน แม่ทอง อินทร์คึดเบิ่งให้ดี แม่นความพี่บ่หล่ายมายา เหน อำคาพี่นกสมเพช คือพระเวสสมเพชตาพราหมณ์ จึ่ง มาถามข่าวดูพอฮู้ ได้เปนชู้บ่ท่อเปนผัว ตั้งแต่งัว เทียมเกวียนมีคู่ นกเขาตู้ยังมีคู่สอง ควรตริกตรอง ดี ๆ สาก่อน บ่มีคู่ซ้อนคนเถ้ากล่าวขวัญ ฯ

๑ ดีสาละดีใจสาแล้ว มาพบแก้วน้อยหน่องามขำ

แม่ทองคำมาเอากับพี่ เถิงเดือนสี่พาน้องทำสวน พาสี่นวลทำกินปลูกหว่าน พี่บ่คร้านการไฮ่การสวน ตามกระบวนทำกินในโลก เกินว่าโชคได้พี่หมอลำ พี่พาทำสวนมอนเลี้ยงหม่อน บ่ให้ฮ้อนเวียกก้อยค่ามื้อ ให้ซ่าลือดังไปทั่วเทศ ในขงเขตร์ประเทศสยาม ให้ลือนามชื่อเสียงในโลก อย่าคึดโศกแม่หม่อมทองดี เกิดเปนปีทำนาขายเข้า ผี่นแลเหล้าพี่บ่จำนำ มีแต่ทำทางดีประโยชน์ สิ่งมีโทษพี่บ่หัวซา โทษโทษาแทงโปเล่นเบี้ย พี่บ่ชี้เอือเว้นได้ทุกอัน การพนันพี่บ่เกี่ยวข้อง เว่าถืกต้องกันเทาะทองดี หาทางมีเงินทองจับจ่าย เจ้าอย่าหน่ายเอาพี่เทียมสอง พาหนูทองทำนาขายเข้า ได้กับเจ้าพี่พาสร้างแปลง แม่หนูแดงควรตรองให้ถี่ ได้กับพี่ปานได้เงินตรา พี่สิพาทำกินก่อสร้าง บ่ให้ค้างการอยู่การกิน อย่าถวิลส่งกาโศกเสร้า บ่ให้เว่าเถิงเวียกเถิงการ ให้อยู่ซานเฝ้าเฮือนไล่ไก่ ญาติแลไพร่โคตรเชื้อวงชา บ่ให้อ่าวหาเถิงความลำบาก บ่ให้

ยากพี่คอยตักเตือน ครูแลเบือนกะบุงกะต่า ได้ทุกท่า
พี่เฮ็ดเข้าใจ หลาแลในอักไหมซ่าหลอด พื้มไหมยอด
ซาวสี่สามสิบ หรือพึ่มขิบพี่ทำถืกต้อง เอาเทาะน้อง
แม่หม่อมทูนหัว บ่มีผัวยามหนาวนอนสั่น นอนสั้บปั้น
ในส้วมผู้เดียว ควรเฉลียวอายเขามีคู่ เพิ่นมีชู้แล่น
ใต้โตนเหนือ เต็มทีเหลือนางงามน้อยอ่อน หาคู่ซ้อน
เทียมข้างเปล่าดาย น่าอับอายสำเดียวมีคู่ เจ้าสิอยู่
ไปให้กายแกง เสียของแพงเฮ็ดหยังน้องหล้า ขายขี้
หน้าซาวโลกเขาหยัน คนคือกันเขามีผัวก่อน เจ้าบ่
ฮ้อนอายเพิ่นแด่หรือ ให้เขาลือหญิงเกกางกาด ขาย
บ่ขาดค่างบ้านเฮ็ดหยัง ควรให้ฟังตามคำพี่ว่า ได้บัก
ส่าบุญเจ้ามีหลาย อย่าเสียดายส้มโออยู่เปลี่ยว มันสิ
เหี่ยวหนังแห้งหย่อนยาน เสียน้ำหวานของแพงแต่พ่อ
โพนเอาะเจาะนานเข้าสิเพ อย่าสนเทเปนจริงจังว่า ฟ้า
บ่ผ่าดอกน้องมีผัว ให้เจ้ากลัวยามเมื่อเถ้าแก่ พ่อแล
แม่เพิ่นมรณา เฮือนเคหาแม่นไผสิเฝ้า นาของเจ้าไผ

สิพาทำกิน แม่สุบินตรึกตรองแน่ ๆ พ่อแลแม่เพิ่นบ่ทนทาน อยู่บ่นานเพิ่นสิตายจาก จักลำบากเจ้าอยู่เอกา พวกพงษาเพิ่นบ่เว่าต่อ เพิ่นสับส่อทั้งเย้ยทั้งหยัน คืนแลวันล่วงไปทุกมื้อ อย่าไข้ซื้อตัวเจ้าล่วงไป ของทางในสิบ่มีค่า เขาสิว่าเว่าเย้ยเยาะหยัน สมพอกันน้องได้กับอ้าย บ่ขี้ฮ้ายสมส่วนพอดี บุญเฮามีได้มาเว่าต่อ เอาเถาะหน่อแม่นกขุนทอง นมทั้งสองตกคอนเสียส่วน สมควรพอได้เอาท่อนทองดี มีสามีปานได้เงินชั่ง ปานได้นั่งเปนนางพระยา วาศนาของนางได้อ้าย บ่ขี้ฮ้ายบุญน้องมีหลาย คือไก่หวายมาพ่อเข้าก้อง มาเหนน้องจันทองงามค่อง มักฮูปน้องใจดิ้นดั่นแด แด ๆ ดิ้นทางกระสันต์อกสั่น กระสันต์โศกฮ้อนน่าหล้ายิ่งหนา ๆ

๑ พั้งเนอหล้าอำคาชู้เก่า พี่คิดอยากเว่านำน้องแต่ดนจนจำจั้งใจชายแสนถ่วง เปนบ่วงบ้าตายดิ้นดั่นแด ให้น้องแขไขให้คำมีบอกพี่ เปนที่ซ้อนชายได้ไคร่ชม เจ้า

ผู้คอกลมส่วยอยากส่วยน่าวจูบ ฮูปพี่นี้ผอมแห้งหล่าคิง เพื่อหมายหญิงได้เปนเมียเทียมวาด คาดแต่ฟ้าแนนน่าวจิ่งเหน เปนตาซ้อนเอาชายเทียมบ่อน หญิงใดพรากคู่ซ้อนชาวบ้านเพิ่นหยัน ว่าสันใดส่ายใจน้องแก้ว พี่ว่าแล้วอดเชื่อใจชาย คนทั้งหลายเขามีผัวอยู่เพิ่นมีคู่พาสร้างพาแปลง อย่าแสวงหวังเอาชายใหม่ได้พี่นี้บุญน้องมีหลาย พี่หมายหมั้นพันธะนังน้องอุ่นแม่คุณบ่เลี้ยงเชี่ยงเมี่ยงเพิ่งไผ ในใจอ้ายหมองหมางจมแจบ คิดแนบน้องกระสันต์เอ้าอุ่นทวง ดวงใจหักต่าวไปเพม่าง เจ้าผู้คิงบางส่วยคือพรหมบั้นหล่อ ซ้อแล้นวมือด้ามเก่งอินทร์ ไผยินได้เหนนางใจหอด คือสิปอดอ้อยส้อยชายซู้บ่มี อินทรีย์น้องเหลืองนวลถึกส่วน ใจบ่วนปื้นนำน้องสู่วัน กระสันต์โฮมเอ้าหมายเอาเทียมแถบ หมายแนบน้องในห้องผ่างหนาว เปนสาวนี้ผัวบ่มีผิดโศลก โชคอื่นมีท่อตือหมายได้เพิ่งไผบาดห่าภัยมาใกล้ตัวนางทงโศก โชคอื่นมีมากล้นบ่

ปานได้มิ่งผัว พี่คึดกลัวตางนางเหลือล้น สองฝ่ายก้นมีผู้ต้องการ แต่นงคราญยังเปนสาวอยู่ ไผบ่อยากเปนคู่ยามชะราการ พั้งพี่วานอย่าคึดพุ้นพี้ เอาพี่นี้เปนคู่ปรึกษา ดีกว่าอยู่เอกาฮามผัวเทียมข้าง เปนแม่ฮ้างไผสิว่าดี ในโลกีย์บ่หมางหมายเว้น เปนตาได้เอาสาดีกว่าอยู่ ไผผู้พรากคู่ซ้อนบุญนั้นบ่เถิง พี่กเลิง ๆ เว่าหมายชมกั้วกลิ่น กินนะเรศน้องไขถ่อนอย่าบัง พี่พั้งความเว่า ๆ เอาแต่ปาก ทุกข์ยากอ้ายวอนเว่าบ่เซาขอให้นงเยาว์น้องปงคำเด็ดขาด คาดสิได้อย่าเนินให้ห่างคำ บ่เปนตาได้ซายลำสิหาใหม่ พี่สิดั้นป่าไม้หาซู้มิ่งชม เจ้าผู้คารมล้นสิดวงซายจมแจบ หวังแนบน้องนางหล้าจิ่งมา คันพี่มาจาเว่าขานเอาฮักพากย์ คำปากหวานดังอ้อยใจส้มกว่าหมากขาม ยามเมื่อซายมาเว่าเอา ๆ คราวแรก ตั๋วพี่แบกหน้าเว่าจนแจ้งบ่เอาหรือเจ้าเหนด้วยนำซายคนอื่น แสนหมื่นต่อบ่ปานอ้ายอยู่แฝง เหลือแฮงอ้ายหมายมาเว่าขอด มาฮอดแล้ว

ตั๋วเลี่ยวหล่ายพลาง เจ้าผู้หางตาส่วยตั๋วชายเสียถ่วง เปนบ่วงบ้าน้ำน้องวั่งเว โทเรกั๊นมโนในขมขอด ย่านบ่ได้กอดน้องเปนชู้อยู่น้ำ เอาชายลำเปนผัวเทียมเผ่า พี่มักเจ้าล้นเจตน์เหลือทวง มักดวงจันทร์จิตรใจสิขาด ลุกพาด ๆ ทบทั่งปานไฟ เหนผู้ใดบ่ปุนปานเจ้า โสกาเส้าน้ำนางเช้าค่ำ หลายพ่ามื้อเข้าน้ำบ่กิน น้องจงตัดสินให้ในใจเปนท่อน เปนต่อนบั้นเส้มอฝ่ายขาดใน ไขมาถ่อนวาจาจริงเที่ยง อย่าเดียงวาดไว้หลายมื้อบ่ดี อย่าให้เสียทีเว่าหลายคำพ้าสิผ่า มักน้องหล้าจึ่งมาเว่าบ่เซา ฯ

---

## กลอนตี่เผิ่ง

๑ ซ้ำห่านตี่เผิ่งต่อกลอน พาเกสรหาตี่เอาเผิ่ง มาไปเบิ่งลางเทื่องโชคมี่ โชคเฮาดีส่องคนเปนคู่ เจ้าสิอยู่หรือว่าสิไป ไปทางใดเผิ่งจึ่งสิมาก คึดลำบากแต่ส่องคนเฮา แม่หนูเภาเจ้าอย่าใจน้อย ไปกับข่อยบ่

ต้องโส่กา พี่สิพาอำคาขึ้นดอยโคกค่อย เสียงอึ่นอ้อยบ่างกูกบ่างลัว ขนหนี่ตัวจิตต์ใจจนสั่น ออกจากหั่นเข้าเล่าดินเขา เสียงกาเวาเขาคูขันท่า กลายไปหน้าเหนหมู่ชะนี ทั้งหมู่หมีหมู่เมยหมู่มั่ง พากันนั่งชมเล่นมวนใจ เสียงหมาในแกมหมู่หมาจอก เสียงกระฮอกแกมหมู่กระแต เหลียวแลไปเหนสัตว์ต่าง ๆ เหนหมู่ช้างหมู่แฮดหมู่เสือ ใจผื้นเผือเกรงกลัวย่านสั่น เสียงจักจั่นฮ้องส่งในดง ขึ้นภูวงภูเขียวพักเหนื่อย พอหายเมื่อยย่ายย่างเดินไป เหลียวไปไกลเหนยอดภูเก้า ข่อยกับเจ้าลัดไส่จอมดอย หาบเอาทอยทั้งหมุดไปพร้อมไปเที่ยวอ้อมหาเผิ้งตามผา ไปเที่ยวหาบ่อนเผิ้งสิอยู่เฮาทั้งคู่ลัดช่องเดินไป ตามวิสัยบ่อนเผิ้งมีมาก มาลำบากเข้าเล่าในบู่ เลยบ์ต้นภูหอมกลิ่นดอดไม้ พาแก่นไท้เดินด้นดุ่งดั้น วันเวียนค่อยลมออนอิดอ่อนข่อนสิแจ้งแสงเม่าขอบเขา ลุกแต่เช้าหุงเข้ากินงายสายพอดีพากันย่ายย่าง เลยบ่พิ่งขึ้นภูลำเภา พากัน

เซาจอมดอยพักอยู่ เสียงวู่ๆลมพัดสาขา หอมบุบผา
ดอกฮังดอกซ้อน ลางวันฮ้อนลางวันเล่าเย็น เถิงกลาง
เวนพาเมียซอกไซ้ ไปแคะไค่หาเผิ้งตามผา เถิงเวลา
ยามแลงแดดอ่อน เสียงวี่ว่อนฝูงหมู่ชะนี ใจบ่ดีพอ
อยากฮ้องไห้ เดิกซักไซ้เสือฮ้องโกนเขา พี่โส่กเหงา
กอดนางแนบข้าง ฟังเสียงซ้างหักไม้ลำซาง พี่กอด
นางติดอกจนแน่น นี่จังแม่นโชคเฮาบ่มี มาเสียทีขัด
ในขัดนอก ปากบ่ออกหาเผิ้งบ่หมาน เปนเหตุการณ์
สันใดบ่ฮู้ พาหม่อมชู้ย้ายย่างลีลา เบิดไปหาภูขี้กะต่อย
เจ้ากับข่อยเลียบเลาะจอมดอย เหนส่อยสอยภูเมง
หน่วยใหญ่ พี่ลัดใส่กับหม่อมพระนาง เดินตามทาง
เหนสัตว์หลายหลาก มาลำบากทางหน้าทางหลัง เหตุ
อิสังมาเปนต่าง ๆ เมียหิด่างมาน้ำบ่ดี มันอัปรีย์หา
เผิ้งบ่พ่อ พี่กนั่งจ้อก้อพักเมื่อยเซาแฮง เถิงยามแลง
เหนสัตว์หลายส่ำ ตะเวนต่ำลัดเขาคันธร หน้าออนซอน
ฝูงเสือเขี้ยวโคร่ง เสียงฟานโบ่งฮ้องฮ่ำตีนผา พาอำคา

พักเซาหุงเข้า ลุกแต่เซ้าย่ายย่างเดินไป ตามวิสัยบ่อน เผิ่งสือยู่ เฮาทั้งคู่เข้าป่าไพรหนา หอมบุบผาดอกจิก ดอกเดื่อ บานเฮืองเฮือดอกมูกดอกกอย ลมวอย ๆ หอมดอกไข่เน่า ข่อยกับเจ้าชมเล่นในดอน เฮาเดินจร หลายคืนลับล่วง ชมมี่ม่วงทั้งซ้ำหมากไฟ เหลียวแล ไปเหนดอกขัดเค่า หอมอูดเอ้าดอกซ้อนจำปี ในคีรี ดงหลวงหลายล่ำ แก้มอ่ำพ่ำแม่หม่อมสุจจัง ให้ระวัง ขี่เข็บแมงบ่อง แดดส่อดส่องหุงเข้ากินงาย ส่ายพอดี จัดของใส่หาบ ยาบ ๆ เดือมลมต้องต้นผา พาอำคา กลับคืนมาบ้าน เจ้าอย่าคร้านดาห่างแต่งถง ฯ

---

## ถามเรื่องม้า

๑ มาส่งสัยแท้แต่ม้าสินธุวา อาชาไนยตัวพระเจ้าจี่ มณีกาบแก้วพระเจ้าขี่ทรง แต่พระองค์ออกไปตัดเกษ ตัดเกษแล้วม้าแก้วไปใส ไผเอาไปฮักษาไว้ท่า อาชา ไนยม้าลวงสูงจักศอก ให้เจ้าบอกสีเขียวหรือแดง

เชิญจอมแพงไขกลอนบอกแด่ ตั้งแต่กี้เปนเหตุสันใด จึ่งได้ไปเปนม้าพระเจ้า องค์หน่อเหง่าตนสัพพัญญู เชิญบุญชูไขกลอนบอกแด่ ให้ตี่แผ่ทั้งผ้าภูษา ผืนสัตถา ทรงออกไปบวช ออกผนวชตัดเกษเกษา ผ้าภูษาถิ่ม ใส่บอกพี่ บอกถ่วนถี่ตามคลองวินัย หรือแขกเอาไป ผูกหัวมันไว้ คึดบ่ได้ประหลาดอีหลี ทั้งเกษผมผาง เกล้าเกษ ผู้วิเศษเอาไปไว้ใส่ หรือกุลาเอาไปเฮ็ดผม เกษาเกล้า เชิญเจ้าเว้าไขข้อต่อกลอน ฯ

---

## บอกเรื่องม้า

๑ โปกเข้ามาถามพอสองส้อน ติดอ้อนต้อนกลอน แก้บ่มี หมอลำดีคอหดจั่นย่น เนื่อตัวสั่นคือลูกนกฮัง เกินว่าจังแทงส่องอ็อกหน่วย ลวยเปนแน่บักเบียเปน เถา โชคของเฮามาตั้งแต่เกิด คงได้เบิดให้เตมสะคืม เบิดเตมริมปานเรือกำปั่น เขาลือลั่นว่าเจ้าลำดี สระบุรี เขายอมเปนน้อง พวกปากช่องทั้งหมู่ปากคง เขามา

เหนยื่นทรงคะมะ มันตี่หื่ฮะเปนไข้เกือบตาย พวกคุณนายมันตี่ตลอด เข้ามาฮอดขาบไว้วันทา เขาลือซาหญิงลำน้องหล้า มาพ่อหน้าสมดังเขาลือ ฟังเสียงอือคือดังนกเค่า ๆ

ฟังเนอเจ้าแม่หม่อมทองดี พี่สิตีบอกไปตลอด บอกให้ปอดตามเรื่องนิทาน ตามตำนานมีมาแต่เค้า ม้าพระเจ้าตนชื่อสัตถา แต่เดิมดามันได้เปนเสี่ยว ได้น้อมเหนี่ยวเปนสหายกัน กับจอมธรรม์โคดมแก่นเหง่า สองแจ่มเจ้าเปนลูกเศริษฐี ในคัมภีร์มีมาพี่ฮู้ พากันอยู่ในเมืองพารา ได้ไปยืมเงินตราได้สามฮ้อยบาท ส่งเงินขาดสองฮ้อยบาทเงิน ยังเหลือเกินอยู่อีกหนึ่งฮ้อย ยามคลาดค่อยตายเกิดเวียนวน ได้เอาตนมาเปนข่อยใช้ บังเกิดให้เปนช้างกุญชร พระเวสสันดรมะที่แจ่มเจ้า ตั้งแต่เค้าเปนข้าติดตาม ทานให้พราหมณ์ชูชกคนถ่อย เถ้าพอกพ่อยเปนทาสตัณหา ในตำราเวสสันดรว่าไว้ จักบอกให้ตามข้อบาลี เมื่อพระภูมิ

โคดมตัดเกษ ม้าวิเศษอกแตกตายไป ได้เกิดก้ำหน แห่งดุสิดา เปนคนฮักษาเทวบุตร์อยู่ในวิมานแก้ว อัน ว่าภูษาผ้ามหาพรหมพับจีบ เอาบรรจุธาตุแก้วเจดีย์ หลังใหญ่ ใส่ชื่อไว้จุฬามณี สีม้ามีขาวคือขี่เถ้า บอก ให้เจ้าทางสูงทางยาว สมพอพาวได้สิบแปดศอก ฯ

---

## ถามเรื่องต้นโพธิ์

๑ ถามใกล้ ๆ แต่บ่อนตาเหน บ่เอาตาเสืออยู่ดงมา เว่า พั้งเนอเจ้าติดต่อกันมา อยู่เวหาเหนพ่อพุ่มพู่ เพิ่น ว่าไม้เกิดอยู่วงพระจันโท แม่นต้นโพธิ์หรือว่าแม่นฮูป หรือแม่นรูปเขียนแต่เดิมดา เบิ่งไปมามีฮูปครกเข้า มีผู้เถ้ากับไก่ผู้อู คึดอึดเปนตาสมเพช น่าสังเวชไผ ตั้งแต่งมา พี่ถามหาไผมาตั้งแต่ง ไผจัดแจงปลูกไม้ โพธิ์ศรี มันจึ่งมีอยู่ในวงแก้ว พี่เหนแล้วนึกอัศจรรย์ เหนทุกวันพี่ยังบ่คัก หรือแม่นยักษ์อยู่ในวงจันทร์ เกิด สำคัญแม่นไผผู้ปลูก สังบ่ออกลูกออกหน่อขึ้นมา ไผ

ฮักษาทำเพียรเช้าค่ำ เทียวหดน้ำจึงบ่ตายไป พี่สงสัย อยากฮู้เฮื่องเค้า อาทิตย์เอ้าฮ้อนฮอดธรณี ไม้โพธิ์ ศรีอยู่เดือนใกล้ ๆ สังบ่ได้เถิงแก่ความตาย มีไก่ผู้ ลายกับทั้งย่าเถ้า ไปเอาเข้าบ่อนใดมาตำ ไปเอาฮำ บ่อนใดมาเลี้ยง ไก่ผู้เกียงจึงใหญ่ขึ้นมา ฯ

## บอกเรื่องต้นโพธิ์

เด็กข่อน ๆ ถามมาบั้นต่าง เจ้าถามในหว่างต้น โพธิ์กลางเดือน บ่เคยเขียนสูตร์เฮียนจักเทื่อ เกิน ว่าเบื่อปานลาบหอยบั้ง ติดปานตังทางขวาทางซ้าย ซ่างมาย่ายถามข้อบ่จน เกิดเปนคนบ่เคยลำแก้ พ่อ แลแม่เพิ่นเลี้ยงใหญ่มา เพิ่นบ่พาขึ้นเถิงชั้นฟ้า ยอม นางหล้าข้อนบ่เหน พระยาเถรคงติดคือพี่ ถามจังซี บ่เหนในธรรม หญิงหมอลำซ่างมาหาเว่า พระสังฆะ ราชเจ้าคงติดคือกัน วงพระจันทร์บ่ได้ไปเบิ่ง สูง ใหญ่เกิ่งบ่เคยไปดู เหม็ดชมพูไปเบิ่งบ่ได้ ซ่างซัก

ไซ้ให้บอกให้ฟัง ฯ

มาสิบอกให้จังในธรรมเจ้าชี้ ปางก่อนกี้ยังมีพระเจ้าใช้ชาติตนชื่อโคดม พระบรมได้เปนกะต่าย เปนน่าหน่ายในโลกสงสาร ละอาหารบ่กินยามค่ำ หลายพ่ำมื้อเพียรต่อบารมี ใจยินดีถือศีลค่ำเช้า อยู่ฮ่มเหม้าในป่าอรัญญา อยู่ไปมาลิงไพรมาเผ้า อยู่ฮ่มเหม้ากับนกกะยาง บอกสำอางบริวารทั้งคู่ ผู้มาเผ้าเปนนิตย์ตามกาล บุญสมภารมารดาแก่กล้า น้อยบ่ช้าฮ้อนฮอดอินทา หลิงลงมาทีปคนภายใต้ เบิ่งฮ่มไม้เหนกะต่ายจำศีล อินทร์แปลงตัวเปนฮูปพราหมณ์เถ้า มาฮ่มเหม้าขอกินอาหาร เวลากาลหิวหอดคึดอยาก ขอทุกภาคตามแต่ปรานี กะต่ายยินดีบ่มีสังให้ ขอทานทอดไว้ชื่นให้เปนทาน อินทร์ชื่นบานยินดีชมชื่น ใจตกตื่นขอทานโมทนา ด้วยศรัทธาขอทานแก่กล้า อินทร์ขึ้นฟ้าเอายอดอ้อยคำ กำเอามายอดอ้อย

สามยอด เอามาขอดแต้มฮูปปะไล้ แต้มฮูปโตคือ
ดังกะต่าย ติดมุมม่ายอยู่วงพระจันทร์ แม้นสำคัญ
พระอินทร์แต้มไว้ เพราะว่ากะต่ายได้ตุ่งต่อสัจจัง อยู่
ภายหลังใต้กก่มเหม้า ลิงนั่งเฝ้ากับนกกะยาง อย่า
ตาฟางบ่แม่นต้นไม้ ฮูปแต้มไว้บ่แม่นโพธิสัตว์ บอก
ขะจัดบ่แม่นครกเข้า ทั้งผู้เถ้าไก่โจ้นบ่มี ในบาลี
หนังสือกะต่าย บ่เชื่ออ้ายไปเบิ่ดคัมภีร์ มันยังมีอยู่
วัดสามปลื้ม แสนอมคมหลายสิ่งนา ๆ หลายภาษา
มีมาต่าง ๆ ฯ

---

## ถามเรื่องเดือนกับตะเวน

๏ มาฮอดนี้พี่สงสัยเรื่องนิทานตามเรื่อง อันว่าเทวดา
ท้าวมหาพรหมฤทธิเดช วิเศษเจ้าคนส่องโลกา ผุด
ขึ้นมาเปนพระอาทิตย์ แสงมีฤทธิฮ้อนเฮ่งเผาผลาญ
มีวิมานใหญ่ได้จักโยชน์ แสงชั่วโชติแจ้งฮุ่งรังศี รัศมี
ใสงามโอภาส อยู่อากาศลอยส่องเวหา ถามอำคา

เปนกลอนติดต่อ มาสิก่อถามเรื่องพระจันทร์ คัณนาวิมานจักโยชน์ ข่อยบ่โจทถามเจ้าด้วยดี ในคัมภีร์ไตรภูมิกล่าวไว้ บอกให้ได้อย่าเว่ามุสา ถามไปหาพระจันทร์อาทิตย์ ให้เจ้าคิดไผเปนพี่ชาย ไผเปนปลายเกิดลุนเกิดก่อน ถามบ่หย่อนในพวกหมู่ดาว แสงเขียวขาวอยู่เทิงชั้นฟ้า เกิดลุนหล้าหรือเกิดหัวปี ถามที่ห้วยหนองบึงน้ำ เกิดพร้อมพร่ำเดือนดาวหรือลุน เชิญแม่คุณบอกมาสาแด่ ฯ

---

## บอกเรื่องเดือนกับตะเวน

๑ ตายกูตายช้างหนายกูหล่อน สิโคยอ่อนมันบ่ถึกฮู ช่างมุฐถามมาต่าง ๆ ปานลูกจ้างถายเงินนำนาย ย่านแต่ตายกลางวงเปนแน่ ปานว่าแง่หน่วงทับถึกตอ ติดจอนจอปานใส่คาเต่า พั่งเสี่ยงเว่าคือยักษ์กุมภัณฑ์ เขากลืออาถันบ่มีไผสู้ พั่งกระทู้ปานพระนักธรรม พั่งเสี่ยงลำปานนกกระวิก พอออยากผิกแล่น

หนี้เข้าดง เห็นสิ่งงบ่มีความเว่า ปานพระเจ้าติดกุสลา มาติกาสวดไปบ่ได้ พึ่งเนอไท้ไทไกลประหลาด แนว ตอนฮาดบ่สู้ต้องชน บ่ถอยก็ดนดำเบิ่งสาก่อน คงได้ ฮ่อนเอาให้เต็มฮิม เต็มสติมเหมิดแฮงจึ่งออก กะเทิน ได้ตอกให้ได้น้ำมัน ฯ

๑ มาสิบั้นบอกให้กระจ่าง บอกในหว่างพระทิตย์ พระจันทร์ คัณนาวิมานอาทิตย์ ใหญ่เปนนิตย์ ๕๐ โยชน์พอดี รัศมีฮุ่งเฮืองวิลาศ บอกให้ขาดวิมานพระ จันทร์ คัณนา ๔๙ โยชน์ มันบ่โพดจากพระบาลี บอก ทวี่เปนกลอนติดต่อ มาสิก่อบอกแต่พอควร ตาม กระบวนตะเวนเกิดก่อน เดือนจึงผ่อนมาเกิดทีหลัง มี จริงจังในธรรมะเทศ บอกตามเหตุดาวเกิดทีลุน แล้ว จึ่งปูนห้วยหนองก่อเกิด แต่งกำเนิดเปนทุ่มเปนโมง บอกตามตรงบ่มุสาวาท ฯ

## ถามเรื่องทวีป

๑ ขอถามเจ้าในทีปชมพู บอกมาดูทีปสามต่อไว้ บอกให้ได้ในทีปชมพู กำหนดดูกว้างท่อใดแท้ ให้ดีแผ่หิมพานต์ท่อใด บอกต่อไปบ่อนเปนแม่น้ำ ประมาณล่ำจักโยชน์เที่ยงจริง อย่าหล่ายพิงบอกไปให้คู่ บ่อนที่อยู่มนุษย์คนเฮา ตามลำเนากว้างท่อใดแท้ ไม้สังแด่ประจำชมพู อย่ามุฤบอกไปตามเหตุ ถามสังเขตในทีปอุดร บอกเปนตอนสัณฐานจักเหลี่ยม ทางล่วงกว้างประมาณท่อใด ให้เจ้าไขบอกมาติดต่อ แม่นไม้ค่อหรือแม่นไม้แค ตามกระแสประจำทวีป ถามในทีปบุพพวิเทหา คัณนาวิมานจักโยชน์ ให้เจ้าโผดตามพระบาลี ในคัมภีร์มีมาแต่เค่า ให้เจ้าเว่าทั้งทีปอมรไขเปนกลอนบอกมาลำแด่ พ่อแลแม่นั่งท่าคอยฟั้ง ฃ

---

## บอกเรื่องทวีป

๑ กรรมกูกรรมกำไรแมงงอด . บาดมันตอดกอด

เข่าซองลอง มองไปใส่บ่มีทางแล่น เกินว่าแค้นปาน กินหมากขาม พออยากแล่นหนีหยามไปสาก็นๆ ย่าน แต่ปีนปานใดพัดเรือเหาะ จนละนอกอลอไม้ไผ่ เสียง ผู้ใหญ่ตีไปสนาม อย่าพ่าวถามเล่งมาหลายเทาะ คง ได้เคาะกันเบิ่งสักที ติดอีหลีปานหีติดดาก ปานขี้กลาก ติดก้นผู้สาว อย่าพ่าวทาวคือคนสาวหลอก อย่าพ่าว ตอกคือตีน้ำมัน โตนี่บ่สำคัญบัญญาบ่แล่น นี่จังแม่น เสียงโจทก์เจาะจัง เบิ่งเพิ่นมังเข้าตาแตด ๆ พ้อน แทด ๆ ยอแข้งยอขา เห็นเจ้าศรัทธาถือหางให้หน่อย เบิ่งเพิ่นปล่อยเสียงออกเต็มไล เสียงหันใจปานเสียง ม้าห้อ ช่างมาพ่อพระอรหันต์ โตบ่ผั้นว่าสิชนะ ย่าน เพิ่นตีหีฮะเปนไข้บ่วยปี้ พั่งคดีเปนแถวเปนถ่อง พวก พี่น้องช่อยข่อยแด่เนอ ตั้งโตเธอบัณฑิตย์นักปราชญ์ ผู้ฉลาดในพระคัมภีร์ ยอมอีหลีบ่มีท่าสู้ ข่อยบ่รู้ใน หมู่นิทาน บ่มีอาจารย์ครูบาสอนสั่ง เหนสินั่งกอดเข่า ซองลอง พั่งทำนองเปนตาน่าย่าน ฯ

มาสิต้านบอกทีปชมพู กำหนดดูกว้างหมื่นโยชน์ แท้ เปนแม่น้ำมีอยู่สี่พัน เปนอรัญหิมพานต์มีสามพัน โยชน์ พี่สิโผดที่อยู่คนเฮา ตามลำเนาสามพันโยชน์ ทัดเทียง บ่หลีกเหลี่ยงหนีออกจากธรรม ไม้ประจำ ชื่อว่าไม้หว้า บ่ได้ช้าบอกทีปอุดร ตามครูสอนสัณฐาน สี่เหลี่ยม บอกให้เยี่ยมทางกว้างฉกรรจ์ ได้แปดพัน โยชน์จริงบ่เศษ จาสังเขตร์ไม้ทีปอุดร นามกรชื่อ กามะพฤกษ์ บอกให้ลึกอมรโตยาน มีสัณฐานจื่อจำ เอาไว ข่อยบอกให้คือเดือนข้างแฮม บอกไปแกม กว้าง ๗ พันโยชน์ อย่าสันโดดไม้ทมประจำ บอกตาม ธรรมแจกเปนแบบอย่าง ให้กระจ่างบุพพะวิเทหา ใน ตำราวิมานสิบห้าโยชน์ บ่อได้โพตจากพระบาลี มัน ยังมีหนังสือกล่าวไว้ พี่บ่ได้เอาอื่นมาปน บ่ได้ตนหา ความมาเว่า ธรรมพระเจ้าเทเทศน์ในกัณฑ์ ๒

---

## ถามเรื่องผู้ใช้หาพระพุทธบาท

๏ ถามแต่เค่าตามเหตุมีมา ตามตำราพระพุทธบาท น่าประหลาดฮอยพระโคดม เดิรจงกรมเหยียบหินลงไว้ สำหรับให้คนไหว้บูชา เหยียบศิลาเปนฮอยพระบาท บอกให้ขาดแต่ก่อนหัวที ตามเหตุมีผู้ใดไปพ่อ น่างึดง่อประหลาดในใจ แม่นผู้ใดใช้ไปให้บอก ให้ไปซอกจึงได้พบพาน คนสามานย์หรือพวกนักปราชญ์ หรือผู้ฉลาดเชื้อหน่อกษัตริย์ ตามบัญญัติพื้นเมืองกล่าวไว้ ศักราชล่วงได้จักพันวัสสา จึ่งได้หาพบเหนพระบาท ผู้ฉลาดอยากฟังนิทาน ในสถานบ่อนพระบาทอยู่ คำคนตู้เอิ้นว่าภูหยัง บอกจริงจังฝูงคนอยากฮู้ บัณฑูญาบู้ขอถามผู้ดี คือสีฮู้คัมภีร์ตำนานต่าง ๆ เพิ่นได้ตัวอย่างไผเว่าสืบมา จึ่งได้หาซอกฮอยพระเจ้า หรือผู้เฒ่าเว่าต่อกันมา หรือชาวลังกาสิงหพแขกเทศ เขาบอกเหตุในเรื่องตำนาน ให้วิตถารบอกมาให้พี่ บ่มีท่อนไปหน้ายิ่งหนา ฯ

# บอกเรื่องผู้ใช้หาพระพุทธบาท

๏ ตายกูตายบ่มีความแก้ คือแหผืนน้อยโคมปลา โตใหญ่ มะไลผูกก้อมเขียนแล้วอ่านฟัง เกินว่าจัง ปานเชือกผูกไก่ มีแต่ใหม่ล้วน ๆ หนักหนาตื่มมา เห็น สิคาติดตายห่านี้ เปนจังซี้เห็นสิเต็มที่ ช่างได้บาลีถาม มาต่าง ๆ ตำราเมืองล่างถามดูชอบกล มันคงโดน คำตอในน้ำ คงได้จ้ำกินปิ่นปลาหมอ เห็นเพิ่นยอดัง ไข่ดังบึ่ง ฮูดังลิ่งโหลมสากตำเกีย บ่แม่นเสืออย่ามา อวดเก่ง อย่ามาเร่งถามหน้าถามหลัง ย่านบ่จังคือ ควายคาคาด โตนี่นี่กขะยาดขนลุกขนพอง เจ้าได้ ทำนองมาแต่ใสใหม่ ๆ ช่างมาไล่เชียงเมี่ยงเข้าซิง เกินย่านหลายเกือบติงบ่ได้ ไพ่แล้วไพ่หนักหน้าหน่วง มา ถามตำราเมืองไทย์แปลก ๆ พออยากแหกเล่น จากวงลำ ตั้งโตทำบัณฑิตย์นักปราชญ์ ผู้ฉลาดใน เรื่องตำนาน พออยากเอ็นอาจารย์ครูบายำเกล้า ๆ

ฟังเนอเจ้าสิเล่าให้ฟัง บอกให้จังเรื่องพุทธบาท

น่าประหลาดเดือน ๔ เดือน ๓ คนหลั่งหลามพากันไป ไหว้ ตามพี่ได้พบในตำนาน พงศาวดารพื้นเมืองกล่าว ไว้ ผู้เพิ่นใช้ค้นคว้าเทียวหา พระราชาทรงธรรมแก่น ไท้ ศักราชล่วงได้- สองพันหนึ่งร้อยหกสิบสามปี ปลาย ตามทำนายแต่ครั้งกรุงเก่า มีพวกเหล่าภิกษุ เมืองไทย์ พากันไปลังกาทวีป ไปสู่ทีปเมืองใหญ่ ลังกา อยากวันทาไหว้ฮอยพระเจ้า ได้ยินคำเว่าอยู่ เมืองลังกา พวกสังฆาลังกาชี้แจ่ง บอกตำแหน่งเรียก ชื่อภูเขา ตามลำเนาสุวรรณบรรพต บ่ได้คดจากพระ บาลี คงจะมีฮอยพุทธบาท นึกประหลาดพวกภิกษุ ไทย์ ฮีบไววากลับเมืองกรุงเก่า มาบอกเล่าพระเจ้า ทรงธรรม จึ่งมีตราประจำไปเมืองต่าง ๆ มีคำสั่งเถิง พวกเจ้าเมือง ฮีบไวเบื้องสืบดูต้นเค้า เขาว่าฮอย พระเจ้าเมืองเฮาก็มี สืบให้ดีตามเขาน้อยใหญ่ ลาง เทื่อได้พบพ่อเปนบุญ หลอนเปนคุณสืบไปเมื่อหน้า น้อยบ่ช้าฝูงพวกเจ้าเมือง บ่ขัดเคืองอาชญาแต่งตั้ง

ตามรับสั่งพระเจ้าทรงธรรม พากันจำเที่ยวหาบ่อยู่ ขึ้นไปสู่ตามภูตามผา หลายเวลาแต่ไปซอกไซ้ เข้าป่าไม้ขึ้นภูหลายที่ เจ้าเมืองสระบุรีสืบไปหลายภาค ได้ความจากแต่นายพรานบุญ ถือกระสุนปืนไปยิงเนื้อ เดินด้วเดียตามป่าตีนดอย พรานนำฮอยเนื้อไปตามป่า เห็นได้ท่ายิงเนื้อถืกปืน เนื้อบ่ยืนแล่นไปพ่าวพั่ง ไปกะทั่งเพื่อยไม้ไหล่ภู พรานตามดูเนื้อไปทางก้น ตั้งพอกพ้นเห็นเนื้อแล่นมา จากรุกขาเพื่อยพุ่มต้นไม้ เนื้อแล่นได้คือบ่ถืกปืน ตาพรานยืนจินดาจี่ใจ้ จึ่งเข้าไปซอกไซ้บ่อนเนื้อออกมา เห็นศิลาฮอยเล็กเปนม่อง คือฮูปฮ่องฮอยเท้าของคน มีน้ำฝนขังอยู่นิดหน่อย ตาพรานถ่อยเลยฮู้นิยาย เนื้อคงหายเพราะได้กินน้ำ เพราะได้กล้ำกลืนน้ำศิลา จึ่งตักมากินทากลากเกลื่อน ทาขี้เฮื้อนติดอยู่ตามตน ด้วยกุศลบุญคุณพระเจ้า ตาพรานเถ้าเลยหายโรคา ตามกายาเกี้ยงดีคือเก่า ผู้เป็นเจ้าเมืองสระบุรี มีคดีมายังกรุงเก่า มาทูลเจ้าตนหน่อ

ทรงธรรม โปรดให้นายพรานนำเข้าไปสู่เขตร์ สู่ประเทศที่ได้พบพาน ทรงพิจารณ์ดูก็เห็นแน่ เห็นเที่ยงแท้ว่าฮอยพระโคดม สมตามคำลังกาแจ้งเหตุ มีสังเวชกลับเกิดศรัทธา สร้างมหาเจดีย์ขึ้นไว้ เสด็จไปไหว้พระบาทเนืองๆ คนชาวเมืองราษฎรได้ฮู้ พากันสู่ชมชื่นยินดี เกิดปีติพากันไปไหว้ ตั้งแต่พระแก่นไท้ตนชื่อทรงธรรม มีประจำเดือน ๓ เดือน ๔ จนเดี๋ยวนี้แต่นั้นสืบมา ฯ

---

## ถามเรื่องทางไปพระบาท

๑ ข่อยบอกแล้วสิแว่เวียนถาม กลับหลังตามถามถงโตเก่า แนวเปนเหล่ามีหญ้าต้องถาง หนาแลบางลองดูส่าก่อน แสงแดดฮ้อนต้องกันฮ่มบัง พั่งเจ้าพั่งสัจจังนองแก้ว ยังบ่แล้วติดต่อกันมา อักอะราพั่งกลอนชี้แจง พี่สิแบ่งถามตามเหตุมี ในคัมภีร์ครูบาสอนสั่ง นั่งใกล้ๆ อาจารย์ข่อยสั่งสอน ถามในตอน

หอสมุดแห่งชาติ...นครราชสีมา



ทางไปพระบาท บอกให้ขาดพระเจ้าทรงธรรม ได้
จำนำสร้างทางไว้บ่ ผู้มาก่อรับเหมาทำทาง แม่น
ขุนนางหรือพวกบ่าวไพร่ แม่นไทใต้หรือแม่นไทเหนือ
ชาวอินเดียหรือแขกประเทศ ฝรั่งเศษหรือฮอลันดา
เฮ็ดมัคคาหนทางพระบาท บอกให้ขาดตามริมหนทาง
ตามระวางถนนเดินไต่ องค์ท่านไท้ได้สร้างศาลา ทั้ง
ขุดสระบึงหนองไว้บ่อ หนทางก่อสร้างไว้ชื่อใด ยัง
สงสัยสพานข้ามห่อง บอกถืกต้องท่านสร้างจักอัน
อัศจรรย์ศรัทธาแก่กล้า มาภายหน้าได้สร้างรถไฟ
รัชกาลท่อใดบอกมาให้แด่ บ่ต้องแว่เดินไต่ตามทาง
ในระวางท่าเรือพระบาท จ้างสิทธิ์ขาดขึ้นขี่รถไฟ แต่
ท่าเรือไปเถิงเขาพระบาท บอกให้ขาดระยะหนทาง
ตราตะรางมีจักกิโลเมตร์ ฯ

---

## บอกเรื่องทางไปพระบาท

๏ ฟังความเว่ามาเข้าในที่ ช่างทวีถามมาบ่หย่อน

พี่เปนไม้อ่อนบ่ทันแตกแหนง อย่าพ่าวแทงหลายเทาะ แหลมเอี่ยน ย่านมันเปลี่ยนกลับเกี้ยงแทงโต ยาง หมากโกบ่คือยางตี๋ว ย่านหน่าหิ่วกลับบ้านคืนเมื่อ ชาติ๋แนวเกลือของเค็มบ่จื๋ด อย่าพ่าวบี๋ดพุ่มไม้หางู ศิษย์ต่างครูคงได้คนอย่าง อย่ามาช่างเว่าเย้ยเยาะ หยัน คนคือกันตี๋นมื๋อมี่พร้อม ช่างสิให้นบน้อมคือ ดังพระยา มันคงคากันคนละแง่ เว้นตั้งแต่พระอรหันต์ โตบ่ผั้นดอกเวยจังซี้ ปานว่าบี้พ้อนแงะพ้อนแงน เหลี่ยวเบิ่งแขนปานแหลวสิแส่ว พออยากตี้นแน่ว ๆ นอนกลี้งเกลือกตาย ย่านเจ้าหลายหำหดค่าคอก อย่าพ่าวตอกหลายเทาะตี่ทอย ส่งสารบักหอยแต่เนอ เชี่ยงเมี่ยง อย่าพ่าวเลียงหลอกให้หอยตาย ย่าน อับอายเชี่ยงเมี่ยงตายก่อน ถือบั้นบ่อนไล่หอยบ่ทัน ๆ

มาสิบั้นบอกไปแต่เค่า องค์ท่านเจ้าตนซื่อทรง ธรรม ได้จำนำสร้างทางตามไต่ มอบทางให้ฝรั่งรับ เหมา นายงานเขาทำทางบ่หย่อน ตั้งแต่บ่อนฝั่งน้ำ

ท่าเรือ เจี้ยระเนี้ยถึงเขาพระบาท ฝรั่งฉลาดรับเหมา

ทำงาน ช้าบ่นานหนทางเลยแล้ว ปั้ดกวาดแผ้วเที่ยว

ท่องสำบาย คนทั้งหลายพากันชมชื่น พากันตื่นทั้ง

ไพร่ขุนนาง เรียกว่าทางฝรั่งส่องกล้อง บอกในห้อง

ทั้งก่อศาลา ตามมัคคาหนทางตามไต่ ขุดสระไว้คน

ได้เพิ่งพา พระราชาทรงธรรมองค์อาจ คิดฉลาดได้

สร้างสพาน เปนสถานไว้ท่าช้างไต่ สำหรับให้คนเดิน

ไปมา คนจึ่งจาเรียกสพานช้าง มาภายหน้าได้สร้าง

รถไฟ โดยสารไปยามไหว้พระบาท บอกให้ขาด

บ่ช้าบ่นาน รัชกาลที่ ๕ ทัดเที่ยง บ่ได้เบี่ยงหนี้จาก

ตำนาน พงศาวดารพื้นเมืองกล่าวไว้ สิบอกให้ระยะ

หนทาง ในระวางท่าเรือพระบาท ได้ขนาดหลายเส้น

พอควร สมประมวญ ๒๒ กิโลเมตร์ ฯ

---

## ถามเรื่องสิ่งของสำคัญในบริเวณพระบาท

๏ ข่อยบอกแล้วถามหน้าต่อไป ยังสงสัยในใจอั้น

ตู้ โตบ่ฮู้ต้องถามผู้เคย มีดเมืองเลยพ้นบ่ห่อนบ่าน ถามเปนย่านติดต่อเปนแถว แนวมันแกวทาวเครือยั่งฮาก ถามในภาคพื้นเรืองตำนาน ในสถานสิ่งของต่าง ๆ อยู่ในหว่างพุทธบาทเถิงภู กำหนดดูมีอสั่งแต่ถามตั้งแต่ของสิ่งสำคัญ มีจักอันมณฑปพระบาทบอกให้ขาดผู้สร้างหัวที่ ผู้เพิ่นมีศรัทธาแก่กล้า ได้ตั้งหน้าปลูกตูปกวมฮอย ให้เจ้าบอกตามฝอยมีมาแต่เค่า ของแต่เก่ามีแท้สิ่งใด เพพังไปมีสั่งเหลือแต่นอกตะแค่ะในบริเวณ ตามเหลียวเหนอยู่ทางทิศใต้ ค้นคูใต่ตามไหล่ภูเขา ถ้าต่งเอาน้ำฝนไว้ใช้ สำหรับไว้ยามแล้งขาดฝน ถามสับปนแม่นผู้ใดสร้าง เพิ่นจ้างช่างคนชาติ์ใดทำ พวกแขกทำหรือฝรั่งเศษ พ้นจากเขตร์พระบาททิศเหนือ เจียระเนียถามไปติดต่อมีน้ำบ่อตั้งอยู่ฮิมธาร ผู้จัดการศรัทธาก่อสร้าง ให้เจ้าอ้างเถิงชื่อเถิงนาม ในสนามเขาพระบาทใหญ่ นับอ่านได้มีถ้ำท่อใด สำหรับไปเที่ยวเล่นแก้โศก ฯ

## บอกเรื่องสิ่งของสำคัญในบริเวณพระบาท

๑ ฟั่งความเว่าปานน้ำท่วมผา ฟั่งเสียงจาปานน้ำท่วมท่ง ถามบ่จ่งสุดเขตร์สุดแดน ปานผีแถนกินควายเดือน ๙ มาเหนเจ้าโตสั่นทัว ๆ ปานลูกงัวย่านเสือโคร่งเขี้ยว อย่าพ่าวเลี้ยวเอาแส้ใส่หลัง หัวใจยังบ่ต้องหนีหน้า ลองจ้อนผ้าแก่เบิ่งจักที่ ชาติลูกคลี่บ่ห่อนหนีค้อน อย่าพ่าวส้อนคือหญ้ามุงเฮือน ย่านบ่เตียนคืนเสียหญ้าไฮ้ พี่เปนหมอลำใหม่ยังบ่ทันเคยตุ้มเฉลยชายลำไว้ก่อน ย่านพ่าวย่อนตักต่อนแกงปลาให้เจ้าเวทนาศิลป์ชัยผู้น้อย พี่เปนคนถ่อยปัญญาบ่มีเหลือเต็มที่ถามมาแปลก ๆ ปานแบกไม้บ่มีบ่อนวางปานตาบอดหลงทางขี้ควายเหยียบเข้า เขาก็ลือว่าเจ้าคนเก่งเรียนหลาย ฟั่งนิยายปานฝนแสนห่า ดีทุกท่าทั้งวาดทั้งวง ฟ้อนเปนกงลายมวยค่องย่อง พวกพี่น้องตบตีนตบมือ เกินว่าคือแท่นอคุณพ่อ ปาน

นกต่อบักหลิ้วส่องเสียง ฯ

มาสิเดียงบอกของต่าง ๆ อยู่ในหว่างพุทธบาทเทิงภู กำหนดดูมีทั้งบ่อน้ำ อยู่ทางถ้ำพุทธบาททิศเหนือ เจียระเนียบอกเรื่องผู้สร้าง ตำนานอ้างเจ้าปราสาททอง เปนเจ้าของศรัทธาคราวแรก เลยเล่าแตกเพมุ่นทะลาย มีเครื่องหมายปรากฏอยู่แด่ บอกให้แด่ของสิ่งจำเปน ตามเคยเหนพี่ชายได้พ่อ บอกเปนส่อมณฑปกวมฮอย เว่าตามฝอยเถิงผู้เพิ่นสร้าง ผู้เพิ่นจ้างพระเจ้าทรงธรรม คาดเปนกรรมหลายปี่ล่วงเข้า แล้วพระเจ้าเสือสร้างอีกที่ เกิดอัคคีไหม้เกี้ยงอ่วยฮ่อย มาภายส่อยหลายปี่นมนาน เถิงรัชกาลที่ ๑ สร้างต่อ เพิ่นได้ก่อปลูกโบสถ์วิหาร ในสถานมีของต่าง ๆ มีหลายอย่างนอกบริเวณ ตามเหลียวเหนอยู่ทางทิศใต้ เจ้าทรงธรรมได้ปลูกราชวัง เพพังไปเหมิดเกี้ยงอ่อยฮ่อย ยังอยู่หน่อยแต่กำแพงวัง อยู่เทิงหลังไหล่เขาพระบาท มหาราชพระเจ้านารายน์

โปรดให้นายฝรั่งจัดแจ่ง ให้ตกแต่งคันคูตามเขา ไว้กั้นเอาน้ำฝนถ้าใช้ ไหลใจ้ๆลงสระใสดี ตามเหตุมีหนังสือกล่าวไว้ จักบอกให้เหลียวไปทิศเหนือเจียระเนียประมาณ ๒ กิโลเมตร์ เจ้าปราสาททองเฮ็ดวังขึ้นฮิมธาร เปนสถานพักยามไปไหว้ เดียวนี้ได้หักบ่นเพพัง ฝาผนังมีปรากฎอยู่ บอกหม่อมชู้ย่อๆเทาะนอ ซ่ำบ่พอทีหลังเอาใหม่ มีถ้ำใหญ่ชื่อว่าประทุน เชิญแม่คุณจื่อจำเนอน้อง ถ้ำหนึ่งร้องเรียกชาดะวัน ถ้ำสำคัญเรียกไปทุกท่า ถ้ำหนึ่งว่าวิมานจักรี ถ้ำดีๆมีอยู่หลายแห่ง เสียงแหง่งๆว่าถ้ำระฆังบอกจริงจังยังอีกให้จื่อ บางถ้ำชื่อมหาสนุก เปนถ้ำสุขปานไปเมืองแก้ว บอกให้แล้วจำไว้อย่าหลง ฯ

---

## ถามเรื่องพระเวสสันดร

๑ ฟังเนอเจ้าเถ้าแก่ทั้งหลาย สิขยายถามเรื่องต้นเหตุ พ่อพระเวสเรียกชื่อสันได แม่สีไวบอกพี่สาแด่

ผู้เปนแม่เรียกชื่อสันใด เกิดอยู่ไส่ไผเปนผู้ตั้ง ถาม กะทั่งพระเวสสันดร เกิดนครเมืองใดบอกแด่ ตัด สายแฮ่ฝากไว้เมืองใด แม่สิไวบอกมาให้พี่ ถาม ถ้วนถี่ติดต่อกันไป นางมะทีเกิดใสบอกแด่ ให้เจ้า แก้อย่าหล่ายมายา ทั้งกัณหาชาลีอ่อนน้อย บอก ให้ข่อยพอตื่มคำถาม อีตาพราหมณ์ชูชกคนเฒ่า หน่า เค่าเม่าเปนตาสงสาร พระภูบาลมะทีเข้าป่า เฮ็ดหน้า หล้าคิดฮอดมารดา คัณนาถามนางอีกก่อน เพิ่น ทานยามฮ้อนหรือทานยามฝน จึ่งได้ขนงัวควายช้าง ม้า ทานนางหล้าแม่หม่อมมะที ถามดีๆในธรรมะ เทศน์ ทานพระเวสยามเช้าหรือแลง ตาเวนแดงหรือ แสงแดดอ่อน เพิ่นจึ่งป่อนส่งให้ตาพราหมณ์ แม่สม งามบอกมาให้แด่ ให้ดีแผ่ในทานะขันธ์ ฯ

---

## บอกเรื่องพระเวสสันดร

๑ ฟังเนอเจ้าน้อยหน่อกุมาร ฯ ศิษย์แลจารย์ฟังข่อย

สิบอก ซ่อยสิตอกปานเพิ่นตี่ทอย บ่มีฝอยหมาบ่ห่อนขี้ บอกถ้วนถี่แต่เค่าประถม พระบรมสญชัยเปนพ่อ ตั้งแต่ก่อพระเวสเกิดมา พี่สิจาบอกไปตามเค่า พ่อแม่เจ้าเกิดปีระกา เดือน ๖ เพ็งวันพฤหัศยามค่ำ เกิดพร้อมพร่ำนางนาถมะที่ ปีระกาเดือน ๖ แรม ๓ ค่ำ เปนกำพร้าพ่อเกิดข้างแฮม ดูตามแผนว่าแฮม ๘ ค่ำ บอกพร้อมพร่ำมื้อเกิดวันเสาร์ ชาวเมืองเขาติเตียนเคียดค่อย ฝูงไพร่น้อยสับส่อเตียนขวัญ สญชัยโยราชาตนพ่อ ฟังคำส่อฝูงไพร่ชาวเมือง เลยขัดเคืองขับตามฝูงไพร่ เขาจึ่งไล่พระเวสตามกาล เพิ่นให้ทานบ่ลิ้งละฮ้อย วันคำค่อยเกิดเมื่อวันเสาร์ เถิงเวลาวันเสาร์ยามเซ้า ฯ

---

## ถามเรื่องสงฆ์รับกะฐิน

๑ ฟังเนอเจ้าคนเก่าเคยชน เคยได้โดนหลายวงจนแตก ขอถามแยกเรื่องรับกะฐิน พี่ได้ยินแต่คำคน

เว่า พระสังฆะเจ้าเพิ่นรับกะฐิน ตามระบิลตำราว่าไว้ กำหนดให้มีพระจักองค์ จึ่งเปนสงฆ์ควรรับท่อนผ้า ให้น้องหล้าบอกพี่ตามตรง มี ๔ องค์รับได้หรือบ่ ถามติดต่อเมื่อหน้าต่อไป ผ้าจังใดเฮ็ดองค์กะฐินได้ ผ้าบ่ควรใช้เปนองค์กะฐิน ตามได้ยินผ้าจังใดแด่ อย่าได้แว่ออกหนีจากทาง บ่แม่นตาฟางอย่าได้หม่นบ่า ฃ

---

## บอกเรื่องสงฆ์รับกะฐิน

๑ ฟังความเว่าหนักเต็มตาชั่ง คือน้ำอั่งต้อนโตนท่างทั่งเขา ฟังสำเนาสมตามคำซ่า ใต้หลุ่มฟ้าเขาย่านสู่คน แขวงเมืองชนบ่มีไผสู้ ฟังกระทู้เปนติ่งเปนสายอธิบายกฎหมายฉาดๆ คือนักปราชน์ฮู้พระคัมภีร์ในโลกีย์บ่มีไผเก่ง คารมณ์เร่งสามส่าวเศษวา ในตำราเพิ่นจับหางฮูด เบิ่งท่าพูดเข้าแบบเข้าแผน เหลียวเบิ่งแขนทำทรงเนื้อดนาด คือสิฮู้ฉลาดในไตรบีฎกเพิ่นเฮียนตกคัมภีร์ศัพท์สาตร์ ปานองค์อาจตนซื่อ

โคดม เสียงนิยมปานเสียงฟ้าฮ้อง มาเห็นน้องพอ
อยากนั่งลง เบิ่งท่าทรงคือแนวผู้ใหญ่ บ่คือไพร่คือ
เชื้อสกุล คือแม่คุณมาแต่บางกอก คือเพินออกมา
แต่ในวัง เบิ่งผิวหนังฮูบโฉมเข้าท่า เหลียวเบิ่งหน้า
มีศรีมีวรรณ์ เพินบ่อัศจรรย์ซ่ำหมอลำน้อย พออยาก
ย่างก่อมก้อยขาบไว้วันทา เอิ้นครูบาโดยๆ ขอรับ
ถวายคำนับยอมือใส่หัว นี่แม่นกลัวจนตัวเนื้อสั่น
เสียงสนั่นไปทั่วมณฑล แขวงอุบลหนองคายเมือง
หล่ม พากันจ่มว่าเจ้าลำดี ไผสิตีเปนบ่ต้องง่อ เรื่อง
สิส่อในมูลกัจจาย อธิบายย่อปลายฉาดๆ บ่ขยาด
ในเรื่องศัพท์แปล เขาซ่ำพื้นว่า ฟังกระแสร์บ่านลม
ล่วงโคก โขกแล้วโขกปานเล่นเบี้ยหอย บ่พอผอย
ย่านแต่ไง่กุ้นๆ ย่านแต่มุ้นปานเข้าแดกงา ย่านแต่
คาลำเดคุณพ่อ ย่านแต่นั่งจ้อก้อสู้เพินบ่ไหว เหลียว
ไปใสบ่มีความเว่า ปานผู้เฒ่าขี่ควายขึ้นโพน ย่านแต่
วนปานเห็นถืกกะต่ำ ย่านแต่ค่ำเฮงเพินบ่ไหว ย่าน

เพิ่นไถบ่มีแฮงยัง ย่านเพิ่นทั่งขี่แตกเต็มหาง แหวกหนทางออกหนีให้แด่ พ่อแลแม่คราวนี้ส่วนตาย สิขยายแล่นไปให้พ้น ข่อยสิหม่นเดียวนี้แล่นหนี ถามทวีบ่หยุดบ่หย่อน ไผสิย่อนว่าไปนำทัน ไผสิหันว่าไปนำได้ บ้านอยู่ใกล้พออยากแล่นคืน จักสิบืนไปทางใดแด่ ๆ

ซ้ำห่านี้สิบอกตามตรง มีห้าองค์ขึ้นไปจึงได้ องค์หนึ่งไว้สำหรับถ้าครอง สี่องค์รองนั่งหัตถบาส จึงบ่ขาดจากคณะสงฆ์ มีสี่องค์รับเอาบ่ได้ ผ้าควรใช้เปนผ้ากะฐิน พระมุนินทร์ตรัสเทเทศน์ไว้ เก่าแลใหม่เฮ็ดได้คือกัน ผ้าที่อันบ่ควรบ่ชอบ ผ้าประกอบขอยืมเขามา ผ้าไปหามาทางบ่แม่น กับผ้าแล่นเปนนิสสัคคีย์ ล่วงราตรีค้างคืนแฮมไว้ บ่ให้ใช้เบ่นองค์กะฐิน แม่ทองอินทร์จดจำเอาแน่ บ่ได้แว่จากพระวินัย บาลีไขเหนจริงจังซี้ เชิญแม่บี้จำไว้อย่าหลงมันเกินตรงบ่ผิดบ่พลาด ๒

## ถามเรื่องธรรมของภิกษุ

๏ พี่บอกแล้วถามหน้าต่อไป ยังสังสัยในใจบ่แล้ว คึดแคว ๆ ตั้งแต่ภิกษุ ขอถามดูภิกษุผู้ฮับ ผู้สิรับ ครองผ้ากะฐิน ตามได้ยินรู้ธรรมจักอย่าง จิ่งควร นั่งเปนองค์ผู้ครอง ตามทำนองบาลีว่าไว้ อดบอก ให้ตามเหตุมีมา ตามตำรากล่าวไว้เปนนั้น ธรรม ข้อหนึ่งนั้นเรียกชื่อสันใด ยังสงสัยข้อ ๒,๓,๔ บอก ถ้วนถี่ทุกข้ออย่าบัง ให้มันจังคือดังใหม่ยุ่ง ฯ

---

## บอกเรื่องธรรมของภิกษุ

๏ ตายกูตายตายวายตายวอด ปานตาบอดบ่เหน หนทาง ปานผู้สาวตาฟางบ่เหนแอ่งน้ำ ช่างมาย่ำ ถามส่อคืนหลัง เบิ่งเพิ่นมังคือดังไก่ต่อ ตักก้อ ๆ ปานนกกะทา เหนสิคาติดตายอ้อนต้อน ปานว่าค้อน ตีบ่อนกลางหลัง พออยากบีดฮูดังหันใจทางหง่อน เลียงไว้ก่อนเดอศรีทนนชัย ฯ

มาสิบอกต่อไปจนเหม็ดจนเสี่ยง ให้มันเกลี้ยงปานเสี่ยนดุมเกวี่ยน เอาให้เหมือนในธรรมพระเจ้าตั้งแต่เค่าปางก่อนหัวที่ ภิกษุมีธรรมอยู่แปดอย่างจึ่งควรนั่งรับเปนองค์ครอง ตามท่านองกล่าวไว้จิ่งซี้ธรรมแปดประการนี้ คือที่ ๑ ให้รู้จักบุพกรณ์ รู้จักตอนกะตัดซักผ้า ที่ ๒ ว่าให้รู้จักถอน ไตรย์จีวรสามโตจึ่งได้ ที่ ๓ ให้รู้จักอธิษฐาน รู้จักกรานกะฐินที่ ๔ ที่ ๕ นี้ให้รู้มาติกา รู้ตำราเดาะกะฐินไว้ ที่ ๖ ให้รู้บริโพชกังวล แม่หน้ามนพึ่งเอาเดอไท้ ที่ ๗ ให้รู้จักเดาะกะฐิน ตามระบิลแบบแผนกล่าวซี้ ที่ ๘ นี้ให้รู้จักองค์ รู้จักอานิสงส์กะฐินบ่พลาด บ่ได้ขาดมีอยู่ ๘ อันแม่หนูจันจดจำไว้ ฯ

---

## ถามเรื่องอานิสงส์กะฐิน

๑ ยังบ่แล้วติดต่อตามกลอน แนวหิวนอนต้องหายาแก้ ชะนะแลแพ้แล้วแต่ผู้พึ่ง ถามบ่บังเปนกลอน

ติดต่อ ข้อต่อข้อหนักหน้าติ่มเตง คือแม่เฮงสี่คน
พยาธิ์ คือนักปราชญ์ติดสังขาโย ถามเปนโตเปน
กลอนต่อไว้ ภิกษุได้รับกรานกะฐิน ตามได้ยิน
อานิสงส์จักอย่าง บอกกระจ่างไขให้เพิ่นฟั่ง อานิสงส์
ที่ ๑ ได้แก่อันใด ให้เจ้าไขที่ ๒, ๓, ๔, บอกถ้วนถี่อย่า
ได้มุสา เพิ่นจ้างมาอยากฟั่งความเว่า บ่กั้วแต่เจ้า
ไขให้เพิ่นฟั่ง ฯ

---

## บอกเรื่องอานิสงส์กะฐิน

๑ เจ้าพั้นเว่าถามอานิสงส์ ย่านแต่งบ่มีความเว่า
ปานผู้เฒ่าตามัวตาฟาง บ่เหนหนทางเดินไปโคมฮั่ว
พี่นี่ความคึดชั่วปัญญาก็หน่อย ขอเปนกอยพอได้
เหมือดเช้า ข่อยย่านเจ้าเหลือยิ่งวิสัย ไปลำทางใด
เขาบ่อถามจักเทื่อ เจ้าได้เฮี่ยมาแต่ทางใด ไปลำไส
บ่มีผู้ส่อ พึ่งมาพ่อคราวนี้หนเดียว พออยากเขี่ยว
แล่นหนีเข้าป่า ย่านปานห่าโตเคยกินคน ย่านแต่จน

ติดตายแก่แด่ ๆ

มาสิแผ่แจกออกให้ฟั่ง บอกจังๆ อานิสงส์ ๕ อย่าง ให้สว่างเหนแจ้งแจบใจ หนึ่งเทียวไปบ่ลาก็ได้ สองซักไซ้เดินเทียวโคจร ไตรจีวรบ่ถือบ่ว่า สามฉันคณะโภชน์ได้ตามกาล ในตำนานไขแปลบั้นไว้ สี่เก็บอติเรกจีวรได้ตามปราถนา ห้าจีวรผ้าผ่อนอันเกิด เปนของเลิดได้แก่ภิกษุ ตามระบุมีมาท่อนี้ กับได้ซี้ขยายเขตร์จีวร ไปเถิงตอนเดือน ๔ เพ็งอีก บ่ได้ผีกจากครองวินัย บาลีไขจำเอาสาแด่ ฯ

---

## ถามเรื่องไฟสามกอง

๑ ยังบ่แล้วติดต่อกันมา ยังมาคาหัวใจค้างอยู่ พี่บ่ฮู้ขอถามจักที่ ชาติคนดีถ้าไดต้องล้ำ กะเทินได้จ้ำเอาให้เถิงฟอย กะเทินนำฮอยต้องให้ได้มั่ง คิดเอ้าอั่งเรื่องไฟสามกอง บอกตามครองพอเปนหมวดเค้า ขอถามเจ้าพอเปนนิยาย บ่ถามหลายนิดๆ

น้อยๆ บอกให้ข่อยอย่าได้อำพาง ไฟกองที่ ๑ ได้แก่อันใด ไฟกองที่ ๒ ที่ ๓ ได้แก่อันใด ให้เจ้าไขบอกมามันแม่น ฃ

---

## บอกเรื่องไฟสามกอง

๑ ฟังเจ้าฟังบุบผังดอกค่า อย่ามาด่าบู้ยบู้ย่ำ บ่แม่นแมงระงำสิมาจากินช้าง หมายสิง่างงัดบ่อนจังๆ พุโธพุธังคุณนายขอรับ ช่างสิให้คำนับคือนายทหาร พออยากคลานเข้าไปก่อมก้อย สังมาคือนายฮ้อยพันเอกศรีโท เหนคนโฮแห่งเสินแห่งเสิก เบิ่งเพิ่นขึ้นเอิกลำจนเสี่ยงไหล ทางเมืองไทยเขาลือพ่างๆ เมืองฝรั่งว่าเกินลำคัญ อเมริกันถือหางทุกหน้า เมืองพม่าเมืองเยอรมัน เกินลำคัญลือหลายกว่าหมู่ บ่มีผู้สู้ในท่าพริบไหว ไปลำไสเขายอมทุกแห่ง ค่ายหมากแข้งหนองหารหนองคาย เขาก็เรียกนายๆ โดยๆ เจ้าข้า บ่มีไผถ้าไผสู้จักคน แขวงเมืองชนเขาย่านปานปอบ

บ่มีผู้โต้ตอบโต้ปากโต้เสียง เมืองเชียงแสนเชียงคาน เชียงค่อ เขาจึ่งง่อในท่าปัญญา ปานว่าเทวดาอินทาธิราช เกินฉลาดฮู้ฮีตฮู้ครอง เมืองเชียงของยอมเปนขี้ข้า ลือทุกหน้าน้อยใหญ่ทั้งมวญ ทางเมืองญวนเมืองแกวเมืองย่อ พากันนบจ้อก้อเอิ้นว่าครูบาเมืองกุลาลือไปตลอด ลือไปฮอดเมืองแขกอินเดีย เขาก็ย่านปานเสือโตมันฮ้ายๆ เลาะเลียบต้ายขงเขตร์เขมร เขาเหลียวเหนนบมือน้อมไหว้ ลงไปใต้เมืองใหญ่อุบล เมืองสากลพะนมเปนไซ่ง่อน ลือสะท่อนต้อนรับคืนนาย เมืองพิมายสุรินทร์สังคะ บ่มีผู้ชะนะในเรื่องโวหาร ทางคอนสารเขาย่านปานห่า บ่มีไผท่าลำใส่จักคน อำเภอพลกับอำเภอนอก เขาจึ่งบอกว่าปานศิลป์ชัย เรื่องพริบไหวดีเกินขนาด เมืองโคราชจนออกระอา เขาก็เอิ้นครูบาถือหางเก่งเด่ง ดีเลิกเซิ่งในเรื่องคารมณ์ เสียงนิยมปานสังฆราช บ่ต้องขยาดทางโจทก์ทางถาม พออยากแล่นหนีหยาม

บ่ลำไปหน้า เขาสิว่าผีบ้าเล่นชี้เจ้าของ พั้งทำนอง

ทั้งเค็มทั้งเปรี้ยว ปานน้ำเชี่ยวโตนผั่งชีลอง ฯ

บอกตามครองพั้งเอาถี่ถ้วน บอกในส่วนเรื่องไฟ

สามกอง กองที่ ๑ ชื่อราคัคคี จำให้ดีจื่อเอาเนอเจ้า

บอกแต่เค่ากอง ๒ โทสัคคี ในคัมภีร์ไขแปลบั้นไว้

จักบอกให้เถิงกองที่ ๓ ตามตำราโมหัคคีเพิ่นเรียก

ให้สำเหนียกจำไว้อย่าหลง เกินว่าตรงตามธรรม

พระเจ้า ฯ

---

## ถามเรื่องแปลไฟ

๑ เจ้าถามกกพี่สิยกถามปลาย แตกกระจายต่อไป

บ่แล้ว ยังคาดแค่วตั้งแต่ศัพท์แปล ราคัคคีนี้แปลว่า

จังใด โทสัคคีโมหัคคีนี้แปลว่าจังใด ให้เจ้าไขแปล

มาหมั้นแม่น ถืกโตแก่นคัมภีร์เมืองไทย เชิญสีไว

บอกมาให้แน่ เฒ่าแลแก่เพิ่นก็อยากพั้ง ถามสมบัง

งามขำน้องแก้ว เดิกมาแล้วความนอนก็จ่น ฝังหมู่

ไก่ผู้โจ้นขันสั้นใส่กัน จันทร์จรค่อยลับเหลี่ยมเสาเสมร
ตะเวนใส่ส่องมาจวนแจ้น แปลงกลอนให้พอคนฮู้เรื่อง
เดียงบอกอ้ายพอให้ส่วงสันต์ ฯ

---

## บอกเรื่องแปลไฟ

๑ ฟั่งความเว่าเปนเลามาติ่ม หนักติ่มหน้าปานน้ำ
อั่งฝาย ช่างขยายถามนี่ถามน่ำ หมายสิ่ย่ำขี้แตก
ขี้แตน ให้ผีแถนนบมือโจ้โก้ แนวหิโม้ต้อยได้เล่น
ฮิม คงได้ซิมกันเบิ่งสักท่า อย่าพ้าวว่าแดกข้างแดก
หลัง ย่านบ่จั่งปานหมอยผู้เฒ่า ฟั่งความเว่าเด็กมา
แห่งหน่วง เปนห่วงบ่แล้วถามหน้าติ่มมา เหนสิคา
ติดตายแก่แด่ พ่อแลแม่ผู้เปนเจ้างาน ให้ส่งสาร
นำหมอลำใหม่ ซ่อยบ่ได้ยอมโจทก์ยอมถาม ปาน
ตาพราหมณ์ยอมหมา ปางนั้นช่างมาบั้นถามบ่อนจัง ๆ
สิให้บีดฮูดังหันใจออกปาก บ่แม่นคันคากบักมังราชา
บ่ห่อนเส็กคาถาแบกขอนยางได้ อย่าพ้าวไง่หลาย

เทาะหมอลำ หมากไข่หำแห่งหดย่าว ๆ มาคือไทยเข้าเจ้าพูดเสียงโหน่งเนว เหลียวเบิ่งเอวคือไทยโคราช ธรรมะชาติโตพระยาแถน ฮูดังแหนหูลาป่างส่าง ๆ

บอกกระจ่างแปลให้เจ้าฟัง แปลจังๆ มีมาแต่เค่า คำพระเจ้าสวากขาโต เจ้าอย่าโสฟังเอาถี่ถ้วน แปลตามส่วนศัพท์ราคัคคี ไฟคือความยินดีกำหนัดให้เกิด ฟังเอาเถิดศัพท์โทสัคคี ตามบาลีแปลว่าไฟคือโทษ หรือความโกรธคับแค้นหุนหัน มาสิบั้นบอกไปติดต่อ ฟังเอาเทาะศัพท์โมหัคคี แปลให้ดีฟังเอาเนอไท้ เพิ่นแปลไว้ไฟคือความหลง ความง่วงงงมัวเมาเปนบ้า บอกน้องหล้าฟังแล้วใส่ใจ แปลตามในบ่ผิดบ่พลาด ฯ

---

## ถามเรื่องเครื่องดับไฟ

๑ ขอถามซ้ำขยำตื่มลงไป เครื่องดับไฟสามกอง

ให้มอด บ่แม่นตาบอดอย่าโคมอุ่มหนาม ไฟทั้งสาม กองใดฮ้อนมาก ฮ้อนหลายหลากกว่าหมู่ทุกอัน ให้น้องบั้นเครื่องดับมามอด กองที่ ๑ มอดด้วยสิ่งใด กองที่ ๒-๓ นั้นมอดด้วยสิ่งใด จิ่งบ่เปนไฟไหม้ไปติดต่อ ไหม้เปนส่อเผาสันดานคน ได้เอาตนเปนสุขค่ำเช้า ฯ

---

## บอกเรื่องเครื่องดับไฟ

๑ พั้งความเว่าเปนต่อนเปนโต คือแตงโมหมากโกหมากพร้าว จ้าวแล้วจ้าวปานน้ำโตนซี่ พั้งคดีในท่าผีปาก ปานว่าผู้พิพากษ์ในศาลฎีกา ยกตำราเอามาอวดอ้าง โตนี่เกินกระด้างแนวบ่เคยเหน เกินเปนเซี่ญบ่มีท่าสู้ บ่เคยฮู้ศิลปศาสตร์วิชา ในตำราสนธิ์นามสมาส บ่ฉลาดในสูตร์ในมูล พั้งเนอคุณอีแม่เนอเกลียง แนวเซียงเมี่ยงอย่าอวดแล่นหัน บาดบักหอยนำทันสิบ่มีความเว่า เขาก็ลือว่าเจ้าปานศรี

ทนนชัย เรื่องพริบไหวบ่มีผู้ท่อ สังมาดีกะต้อคุณพ่อทั้งหลาย เหนสิตายฉิบหายห่านี้ หมกหมากมี่แตกเต็มคีไฟ ผู้เฒ่าจังไฮเก็บกินเหมีดฮ่อย พออยากเอาค้อนต่อยตีบ่อนกลางหลัง เกินว่าจังบ่มีความเว่า ๆ

บอกแต่เค่าในเครื่องมอดไฟ ในธรรมไชแจกเปนข้อ ๆ บอกติดต่อกองหนึ่งเปนเถ๋า เพินให้เอากายคตานุส์สติ คือให้พิจารณาฮูปฮ่าง ตามระหว่างในเนื้อกายา กับอศุภากรรมฐานด้วย เจ้าอย่าส่วยพั้งแล้วจื่อเอา บอกสำเนากองสองต่อไว้ เพิ่นจิ่งให้มอดด้วยเมตตา ปราถนาความสุขเผือแผ่ ผายให้แก่สัต์ตว์นอกจากตน ทศะพลไชแปลบั้นไว้ จักบอกให้กองสามตามกลอน ตามครูสอนบอกมาแต่เค่า บอกให้เจ้ามอดด้วยสันทนา เจรจาไต่ถามผู้อื่นจิ่งสีตื่นจากความโมหา ตามตำราเหนมาจังชี้ กองที่สามนี้ฮ้อนกว่าทุกกอง ๒

## ถามเรื่องเทพะดา

๑ ถามแต่เค่าเทวดาสามหมู่ บอกให้คู่หมู่หนึ่งชื่อใด บอกต่อไปหมู่สองตลอด จนเท่าฮอดหมู่สามตามกลอน พระชินวรไขแปลชักสูตร์ ขอเข้าพดถามเบิ่งสักที่ ชั่วแลดีเหนกันผีปาก แนวขวัญถากต้องไต้สับขอน หอนของโตบ่โงมาเบิ่ง ฯ

---

## บอกเรื่องเทพะดา

๑ พั่งเจ้าพั่งบุบผังดอกม่วง มาเปนห่วงกลอนแก้บ่มี หมอลำดีถามมาซ้อนๆ ปานว่าม่อนอยู่จ่อทาวใย ปานว่าไทยฮ้องเพลงโคราช นี่ระนาดเอ้าอั่งเต็มทน เหนสิจนคราวนี่เปนแน่ พออยากเอินยาแม่ขอรับกระผม พั่งคารมบ่หยุดบ่หย่อน ตั้งโตต่อนท้าวศรีทะนนชัย เรื่องพริบไหวบ่จนดีๆ เปนจังซี้ข่อยบ่อยากลำ ตั้งโตทำโตเฮอเชียงเมี่ยง หมายสิเอาให้เกลี้ยงบ่มีทางไป ไหนก่อไหนเล่นกันลองเบิ่ง ให้

มันเกิงพุ่นพี่ดีแล้วจิ่งเซา สำเนานี่คงมีคนแง่ ซะนะ และแพ้ครูเค้าสั่งสอน หมายสิถอนตัดไม้ไฟลามไหม้ ป่า บ่แม่นแนวห่าก้อมบ่มีย่านย่อนไผ แนวศิลป์ชัย บ่ยอมเปนน้อย คงได้ต่อยกับยักษ์กุมภัณฑ์ โตนี่ หดยักยันปานปลาถืกลอบ ปานผีปอบย่านหัวหว้านไฟ ถามอันใดมีดตื่บแปดด้าน เกินว่าย่านจนสั่นจนสาย ฟังนิยายปานเรืออากาศ เสียงกาด ๆ ใบพัดมันดัง แนวระฆังเสียงมันบ่ก้อง แนวชาตีฆ้องเสียงบ่ท่อกลอง เพล พระนาคะเสนคงมีท่าแก้ คงได้แต้กับพระยามิลินทร์ อย่าอวดผีตีนหลายเทาะบักเมียง ย่านแต่บ่เปนเรื่องบาดเต่าคุมทัน ๑

มาสิปั้นบอกไปแต่เค่า บอกให้เจ้าเทวดาสามหมู่ หมู่ที่ ๑ เรียกสมมุตติเทพ หมู่ที่ ๒ เรียกอุปัตติเทพ หมู่ที่ ๓ เรียกวิสุทธิเทพ บอกสังเขปพอเปนนิยาย ขยายหัวข้อยอไปกลอนใหม่ ไล่หมู่เนื่อเผื่อเข้าใส่ดอน ๒

## ถามเรื่องแปลเทวดา

๑ ยังบ่แล้วติดต่อกันไป ยังสงสัยหัวใจบ่โหล่ง ถามบ่จ่งเทพสามอีกที่ แปลให้ดีสมมุตติเทพ อย่าให้เหมบคือเพิ่นตอนงัว ถามทูนหัวตีกลอนบอกแด่ ให้ตีแผ่บอกสมมุตติ แปลให้ดีวิสุทธิเทพ ความสังเขปแปลว่าจังใด พี่สงสัยสงกาโศกเศร้า มาพ่อเจ้าขอเพิ่งปัญญา ฯ

---

## บอกเรื่องแปลเทวดา

๑ ฟังเสียงเว่าคือเห่าจงอาง ฟังเสียงคางคือเสือโคร่งเขี้ยว ย่านเจ้าเกียวคือดังงูเหลือม ย่านเจ้าเทียมสำกินคือถั่ว แนวเฮือฮั่วต้องหาชันยา เกินระอาคารมนักปราชญ์ ผู้ฉลาดฮู้นอกฮู้ใน ถามอันใดสุ่มสี่สุ่มห้า หนักตื้มหน้าแถมมาเอ้าอั่ง พอ อยากนั่งพับเพียบสองขา ขอสมมาอ่อนยอมเปนแหล้ง ติดแอ้งแม่งกลอนแก้บ่มี ศระบุรีเคยไปลำเบิ่ง บ่มี

ผู้เลิกเซิ่งปานเจ้าจักคน แขวงอุบลอีทองสามส่าว
เสียงจ้าว ๆ คนซ่าแซว ๆ หมอลำแหลวสิงห์โตคน
ใหญ่ พี่ไปลำใส่เขาย่านทุกคน แขวงเมืองชนบัก
นวลตาเบี่ยก พั้งมันเฮี่ยกสองกุกสามกู พี่ลำใส่ดู
เกือบแล่นเข้าป่า ไปพม่าใต้ซิ้นคานหาม ลำใส่สม
งามติดตายเอ้งแม่ง ซ่างมาเกลิ้งถามน่วนถามนี่ ฯ

พั้งดี ๆ สิแปลให้เบิ่ง บ่ลัดเคิ่งแปลต้นแปลปลาย
ตามธิยายครูบาบอกให้ สมมุตติเทพแปลว่าเทวดา
โดยสมมุติ อุปั๊ตติเทพแปลว่าเทวดาโดยกำเนิด วิสุทธิ
เทพแปลว่าเทวดาโดยความบริสุทธิ์ มันบ่หลุดจาก
ธรรมพระเจ้า แปลเปนเค้าจำไว้เนอนาง ฯ

---

## ๕๖
## ถามเรื่องแบ่งเทวดา

๑ ซ้ำห่านี้ถามหน้าต่อไป ยังสงสัยมีมาบ่แล้ว คึด
แค่ว ๆ อยากถามผู้เคย แนวเปนเขยต้องเจี่ยมพ่อเฒ่า
ถามแต่เค่าปางก่อนมีมา เทวดาสมมุติได้แก่อันใด

ถามต่อไปเทวดากำเนิด บอกไปเถิดอย่าได้มุสา ตามตำราแบบแผนแจกไว้ ข่อยบ่ได้ต้องโจทก์ถามหา เชิญอำคาบอกมาสำแด่ ให้ตี้แผ่เทวดาบริสุทธิ์ อย่าให้หลุดคืออันใดแท้ ฯ

---

## บอกเรื่องแบ่งเทวดา

๑ พั้งเจ้าพั้งบุบผังดอกดู่ อย่ามาขู่ให้กระต่ายหลบซิง บ่แม่นลิงมันสิหลบลูกหน้า หมายสิฆ่าไล่ให้จนแจ พั้งกระแสปานฝนเดือน ๙ พั้งความเว่าหนักมาคือนุ่น เหนสิมุ่นปานลาบปลาตอง แนวกระบองบ่หนี้กะโต้ อย่าพ้าวไพ่ถามน่วนถามนี้ ทรพี้ต้องได้ซนพ่อ เชื้อนกต่อตบปี้กแล้วขัน สิขอเข้าดันให้ล้นต่อตูดให้มันขี้แตกปูดหมาอิ่มสามโต เห็นคนโฮ่ว่าแต่โตสิแพ้ พ้อนออกแต้โบกข่วมโบกหงาย ปานว่าเมืองพิมายหัดมวยโคราช ตี้ขนาดปานท้าวมโหสถ โตนี้เหม็นปานตดบ่อยากเข้าใกล้ ไทยเรียกกะใต้ลาว

เรียกกะบอง ลาวเรียกกะจองไทยเรียกกระจ่า ได้คนท่าในเรื่องคารม ฯ

ซ้ำห่านี้สิบอกตามกลอน ตามครูสอนมีมาเกินแม่น มาสิแล่นแจกออกให้พั้ง บอกให้จั่งเทวดาสมมุติ ตามสังยุติคือพระราชา พระชายาเทวีแก่นเหง่า ทั้งลูกเต้าราชกุมาร เอ็นคำขานเปนผู้ประเสริฐ เทวดากำเนิดคือวัดถุเทวา ภุมเทวดาอยู่ตามพื้นภาคมีหลายหลากอากาศเวหา เรียกอากาศะเทวดาจำจื่อ บอกในชื่อเทวดาบริสุทธิ์ คือผู้หลุดพ้นจากกิเลส พ้นจากเขตร์เครื่องผูกพัวพันธ์ คือพระอรหันต์จื่อเอาเนอน้อง ฯ

---

## เดินดงชมป่า

๑ มาฮอดนี้เดินดงเข้าป่า เจ้าอย่าช้าตกแต่งไวว่า เข้าไพรหนาตื่นเขายามเช้า เสียงอูดเอ้าจักจั่นแมงอี่ ฝูงชะนีไต่โตนตามไม้ เด็กซักไซ้เสือสางช้างป่า หมา

จอกฮ้องเสียงก้องทั่วดง ผีพงฮ้องเสียงออยกองก่อย ส่ม่อยฮ้องเย็นจ้อยอยู่ดอย กอยใจต้นดงหลวงลัดล่วง พวงหมากไม้ยอยไฮ่ง่าไฮ เดินไปหน้าไพรสาณฑ์แสนย่าน บานแบ่งพั่วพวงส้อนกะจอน อรชรไม้เต็มไพรป่าใหญ่ ไก่เถื่อนเต้าขันขันก่อมกัน หอมพรรณเอ้าจำปานอป่า พาง่าย่อยเต็มก้านดอกจาน แคมธารน้ำแถวสะพังเลียบฝั่ง สมั่งพั่วเปนซันถี่ถัน มลิวันส้อนหอมออนอิดอ่อน ซ่อนสิแจ้งขัวซุ่มอึ๊ดสุ่ม นกมุ่มฮ้องอุตอูเทียมคู่ นกจี่จู้จาจ้อยอินออย เหนดอยขั้นผาซันเปนลั่น วันวิ่งค่อยเดินย่ายล่วงกาย หลายส่ำไม้ในป่าไพรหนา บุบผาเผยกลิ่นซูเชยซู้ สุรีย์ค่อยโองฟานเดินผ่าน บินต่านเต้นไล่ซ้างส่งลาง ตามทางพั่วกะจอนหอมอ่อน สออนดอกต้างสองข้างแค่ทาง พานางกั้วชมพวงมีม่อง ดวงเกศแก้วเปนแถ่วถ่องแถว ดูแนวไม้เลียนลำต้นต่ำ นกฮ่ำฮ้องปลายไม้ฮ่ำไฮ สีใสต้นจันทน์แดงหนามแท่ง หมากแหน่ง

105 895.9112 ม.30 ม. 11058
D.294
ฉ.2



พั่วพวงส้มน่าชม คือนมชู้ทองดีน้องพี่ มีกาดต้าย
คายค่อหมื่นกอ นกหอฮ้องกลางดงเสียงส่ง พงค่าง
เต้นหมี่เหม่นกะต่ายเหน แตเลนจ้อนในดอนฮอกด่อน
ส่ออนแม่น้ำปลาบ้อนแล่นซอน ปลายอนกั้วมังกรแข่
ด่อน ปลาค่อบ้อนฟองเต้นปลากะเหน กางเวนฮ้อน
ปลาตองลอยล่อง พี่แลน้องตาจู้ผ่อดู ปลาหมูพร้อม
ปลาเสือหาเหยื่อ เหลือแม่น้ำซิวอ้าวหมู่ขาว ส่ม
พาวน้องกองสู้ชู้พี่ มีมากล้นชมหน้าป่าหนา ฝูงบุบผา
เปนแถวเลียนล้อม มีน้ำอ้อมเปนฮ่อมนองไหล เหลียว
แลไปเหนมัจฉาชาติ์ ปลาฉลาดปลากดปลาเซียน
ลอยเทียมกันปลากะทงใบ้ ปลาแข่วใกล้ปลาหมูปลา
เสือ มันลอยเพื่อตามขอนกินกุ้ง ท้องอุ้งบุ้งเขาว่าปลา
ดุก เกินสมุกชมปลาต่าง ๆ อยู่ตามหว่างเลียบเลาะ
ฝั่งธาร มีดอกจานลำดวนไข่เน่า ดอกขัดเค้าเกศแก้ว
จำปี ในคีรีดอกแดงดอกดู่ ฝูงแมงภู่บินแล่วส่วนสน
ชมไปดนแห่งเหนหลายอย่าง เหนต่าง ๆ ถักแถ่นางนี

กินารี่นางคานพร้อมพร่ำ ตวันต่ำผี่ป๋าผี่ดง ทั้งผี่หง
คางแดงน่าย่าน ใจสะท่านจนสั่นจนสาย คางยักยาย
เขาว่าผี่ป๋า เชิญน้องหล้าให้ชมมันพอ ฯ

---